**ກ່າວທັກທາຍ**

ສະບາຍດີພໍ່ແມ່ພີ່ນ້ອງຊາວລາວທັ້ງໃກ້ທັງໄກ

**ອະທິຖານເປີດ**

ຂ້າແດ່ພະບິດາເຈົ້າຜູ້ສະຖິດໃນຟ້າສະຫວັນ ຂອບຄຸນພະອົງສຳລັບເຊົ້າວັນສະບາໂຕມື້ນີ້ທີ່ໃຫ້ພີ່ໆນ້ອງໆຂອງຂ້າພະອົງໃນພະຄຣິດໄດ້ມີໂອກາດເຂົ້າມາຫາພະອົງດ້ວຍຄວາມຢຳເກງ ຂໍໃຫ້ການນະມັດສະການແລະຄຳອ້ອນວອນຂອງພວກຂ້າພະອົງເປັນທີ່ຍອມຮັບແລະຖະຫວາຍກຽດແກ່ພະອົງ, ໂອ້ພະບິດາເຈົ້າພວກຂ້າພະອົງເຊື້ອເຊີນພະວິນຍານບໍຣິສຸດມາເປີດຈິດໃຈຂອງພວກຂ້າພະອົງໃນຂະນະທີ່ພວກຂ້າພະອົງເປີດສຶກສາພະຄຳພະອົງ. ຂ້າໃຫ້ເຂົ້າມາສະຖິດໃນຈິດໃຈຂອງພວກຂ້າພະອົງໃນເຊົ້າມື້ນີ້ ແລະຂໍໃຫ້ຂ້າພະອົງທັງຫລາຍກະທຳຕາມນ້ຳພະໄທຂອງພະອົງຈົນສຳເລັດ. ອະທິຖານໃນນາມພະເຢຊູຄຣິດເຈົ້າ. ອາແມນ.

**ເນື້ອໃນເລື່ອງ**

**ເລື່ອງເປີດ**

ມີເດັກຊາຍຄົນ ລາວຢາກຂໍຄວາມຊ່ອຍເຫລືອຈາກພະເຈົ້າແຕ່ລາວບໍ່ແນ່ໃຈວ່າພະເຈົ້າຈະໄດ້ຍິນຄຳຂໍຂອງລາວຫລືບໍ່. ອັນທີ່ຈິງແລ້ວເດັກຊາຍນີ້ອາຍຫລາຍທີ່ຈະຂໍ ເພາະລາວບໍ່ເຄີຍໄປໂບດຈັກເທື່ອ. ເດັກຊາຍນີ້ເຄີຍໄດ້ນັກເທດຄົນໜຶ່ງເທດຜ່ານວິທະຍຸວ່າ "ຖ້າເຮົາຂໍຫຍັງກໍຕາມໃນນາມພະເຢຊູ ເຮົາຈະໄດ້ຮັບສິ່ງນັ້ນ" ເດັກຊາຍນີ້ບໍ່ຮູ້ວ່າຈະຂໍໃນນາມພະເຢຊູແນວໃດ ລາວກໍເລີຍຕັດສິນໃຈທີ່ຈະຂຽນຈົດໝາຍເອົາ ລາວໄດ້ຂຽນໃນຈົດໝາຍວ່າລາວກຳລັງມີຄວາມຕ້ອງການເງິນ 100 ດໍລ້າຫລາຍ. ຂຽນຈົດໝາຍເສັດແລ້ວລາວກໍສົ່ງຈົດໝາຍອອກໄປ. ຫລັງຈາກນັ້ນບໍ່ດົນ ຈົດໝາຍນັ້ນກໍໄປຮອດໜ້າໂຕະຂອງປະທານນາທິບໍດີຂອງສະຫະລັດອາເມລິກາ ກໍບໍ່ຮູ້ວ່າມັນໄປຕົກໄດ້ແນວໃດ. ປະທານນາທິບໍດີກໍອ່ານຈົດໝາຍຂອງລາວແລະມີຄວາມປະທັບໃຈຫລາຍໃນຄວາມຂອງເດັກຊາຍ ແລະປະທານນາທິບໍດີກໍບອກເລຂາຂອງລາວໃຫ້ເອົາເງິນ 5 ດໍລ້າໃສ່ໃນຊອງແລ້ວສົ່ງກັບໄປຫາເດັກຊາຍ

ຫລັງຈາກນັ້ນສອງສາມມື້ຈົດໝາຍກໍມາຮອດທີ່ຢູ່ຂອງເດັກຊາຍ. ເດັກຊາຍນີ້ກໍເປີດຊອງຈົດໝາຍດ້ວຍຄວາມຕື່ນເຕັ້ນ ແລ້ວກໍເຫັນເງິນ 5 ດໍລ້າໃນຊອງ ລາວຂຽນຈົດໝາຍໄປຂອບໃຈພະເຈົ້າດ້ວຍຄວາມຮູ້ບຸນຄຸນ ແລະລາວກໍຂຽນໃນຈົດມາຍຕື່ມອີກວ່າ "ຂ້າແດ່ພະເຈົ້າ ຂອບຄຸນພະອົງທີ່ຕອບຄຳຮ້ອງຂໍຂອງຂ້ານ້ອຍ ແຕ່ພະອົງບໍ່ໜ້າສົ່ງຈົດໝາຍນີ້ຜ່ານ ວໍຊິງຕັນ ດີຊີ ເລີຍ. ພວກເຂົາມັກຈະເອົາເງິນໃນຊອງນັ້ນມົດ."

ພີ່ນ້ອງທີ່ຮັກ, ພີ່ນ້ອງມີຊື່ສຽງຮຽງນາມວ່າແນວ?

ຫົວເລື່ອງຂອງບົດເທດສະໜາຂອງຂ້າພະເຈົ້າໃນເຊົ້າມື້ນີ້ແມ່ນ **<u>ເຈົ້າຊື່ຫຍັງ?</u>** ຂໍໃຫ້ຄິດກ່ຽວກັບຄໍາຖາມນີ້ໃຫ້ດີ. ຢ່າງນີ້ເຮົາທຸກຄົນມີຊື່ຢູ່ຊື່ໜຶ່ງ ຊື່ບາງຄົນອາດສັ້ນ ມີພະຍາງດຽວ ຊື່ບາງຄົນອາດຍາວມີຫລາຍພະຍາງ ຄືດັ່ງຊື່ຂອງຄົນລາວຫລາຍຄົນ ເຊັ່ນ: ມະນີວັນ ວົງຈັນທາ ທອງສະຫວັນ ວົງພຣະຈັນ ຫລື ເອກະຣິດ ຕັນຕຣະຣຸ່ງໂຣດ. ແລະຫລາຍຄົນໃນທີ່ນີ້ມີຊື່ຫລາຍກວ່າຊື່ດຽວ. ໃນຕອນໃດຕອນໜຶ່ງຊື່ທີ່ເຮົາມີນີ້ແມ່ນມີຄົນຕັ້ງໃຫ້. ທ່ານຮູ້ຫລືບໍ່ວ່າໃນຊີວິດຂອງຂ້າພະເຈົ້າມີຄົນຕັ້ງຊື່ໃຫ້ຂ້າພະເຈົ້າຫລາຍກວ່າ 10 ຊື່. ຕອນທີ່ຂ້າພະເຂົ້າເກີດມາພໍ່ແມ່ຂອງຂ້າພະເຂົ້າຕັ້ງຊື່ໃຫ້ຂ້າພະເຈົ້າວ່າ "ແສງທອງ" ເຊິ່ງມີຄວາມໝາຍວ່າ "ລັງສີແຫ່ງທອງຄໍາ" ຫລື "ແສງແຫ່ງທອງຄໍາ" ແຕ່ພີ່ນ້ອງຮູ້ບໍ່ວ່າພໍ່ແມ່ຂອງຂ້າພະເຈົ້າບໍ່ເຄີຍເອີ້ນຂ້າພະເຈົ້າຕາມຊື່ທີ່ເຂົາຕັ້ງໃຫ້. ພວກເຂົາເອີ້ນຂ້າພະເຈົ້າອີກຊື່ໜຶ່ງອີກ ເຊັ່ນວ່າ ຄໍາຫລ້າ ຫລືຄໍານ້ອຍ ຫລື ລູກຫລ້າ." ພັນລະຍາຂ້າພະເຈົ້າກໍຮ້ອງຂ້າພະເຈົ້າຕາມຊື່ຂອງຂ້າພະເຈົ້າ ລາວເອີ້ນອີກຊື່ໜຶ່ງອີກ. ເມື່ອໃດທີ່ລາວຮ້ອງຂ້າພະເຈົ້າຕາມຊື່ຈິງຂອງຂ້າພະເຈົ້າ ເມື່ອນັ້ນຂ້າພະເຈົ້າຮູ້ແນ່ນອນວ່າຂ້າພະເຈົ້າຈະມີປັນຫາແນ່ນອນ. ບໍ່ວ່າລາວຈະເອີ້ນຊື່ຫຍັງກໍຕາມ ສິ່ງທີ່ໜ້າສົນໃຈກໍຄື ຄໍາທີ່ຂ້າພະເຈົ້າຂານຕອບຮັບ.

ເປັນຫຍັງພວກເຮົາຈຶ່ງຕ້ອງມີຊື່? ຖ້າໃຫ້ຂ້າພະເຈົ້າຕອບຂ້າພະເຈົ້າຈະຕອບວ່າ ຊື່ຂອງພວກເຮົາແມ່ນໃຊ້ເພື່ອບອກເຖິງຮູບຮ່າງລັກສະນະອັນສະເພາະຂອງເຮົາ ໂດຍບໍ່ຕອ້ງອະທິບາຍວ່າຮູບຮ່າງລັກສະນະເປັນແນວໃດ ພຽງແຕ່ຮ້ອງຊື່ກໍ່ພຽງພໍ. ຖ້າຫາກວ່າເຮົາບໍ່ມີຊື່ພວກເຮົາກໍບໍ່ຮູ້ວ່າໃຜແມ່ນໃຜໃຜເປັນຜູ້ໃດ. ແມ່ນບໍ່ພີ່ນ້ອງ? ມັນແມ່ນສິ່ງສໍາຄັນແລະສິ່ງຈໍາເປັນທີ່ເຮົາຈະຕ້ອງມີຊື່. ພີ່ນ້ອງວ່າຄືຂ້າພະເຈົ້າບໍ່? ຊື່ແມ່ນສິ່ງທໍາອິດທີ່ຄູ່ສາມີພັນລະຍາຈະຕ້ອງໄດ້ຕົກລົງກັນວ່າເຂົາຈະຕັ້ງຊື່ສະມາຊິກຄອບຄົວຄົນໃໝ່ວ່າແນວໃດ. ຊື່ແມ່ນສິ່ງທໍາອິດທີ່ເຮົາບອກເມື່ອເຮົາແນະນໍາຕົວເຮົາ.

ໃນພະຄໍາພີ ຊື່ມີໄວ້ຫລາຍກວ່າບົ່ງບອກເຖິງລັກສະນະ. ຄວາມຈິງແລ້ວການຕັ້ງຊື່ໃຫ້ລູກແມ່ນສິ່ງທີ່ມີຄວາມສັກສິດຫລາຍຕໍ່ປະຊາຊົນອິດສະລາແອນ. ພີ່ນ້ອງຮູ້ຫລືບໍ່ວ່າກ່ອນທີ່ເດັກນ້ອຍຢິວຈະມີອາຍຸຮອດ 12 ປີ ພວກເຂົາຈະຕ້ອງສາມາດໄລ່ເຊື້ອສາຍຂອງເຂົານັບຕັ້ງແຕ່ອາດາມລົງມາຫາພວກເຂົາ. ເລື່ອງນີ້ເປັນເລື່ອງຄົນຢິວໃຫ້ຄວາມສໍາຄັນຫລາຍ ເພາະສະນັ້ນພະຄໍາພີຈຶ່ງໄດ້ເວົ້ານານສົມຄວນກ່ຽວກັບເຊື້ອພັນແລະທີ່ມາຂອງແຕ່ລະຕະກູນ.

## 144,000 ຄົນ

ເຊົ້າມື້ນີ້ຂ້າພະເຈົ້າຈະພາພີ່ນ້ອງໄປຮູ້ຈັກກັບຄົນພິເສດຢູ່ກຸ່ມໜຶ່ງ. ພວກເຂົາເປັນກຸ່ມຄົນພິເສດທີ່ພະເຈົ້າໄດ້ຊົງເລືອກໄວ້ ພວກເຂົາເປັນກຸ່ມຄົນທີ່ໂດດເດັ່ນໃນທ່າມກາງເພື່ອນມະນຸດດ້ວຍກັນ ພວກ

ເຂົາເປັນກຸ່ມຄົນທີ່ບໍ່ຄືໃຜແລະບໍ່ມີໃຜຄື. ແລະພວກເຮົາກໍຮູ້ດີວ່າເຂົາເຫລົ່ານັ້ນແມ່ນໃຜ ພວກເຂົານັ້ນກໍຄື 144,000 ຄົນນັ້ນເອງ. ຢາກໃຫ້ພີ່ນ້ອງເປີດພະຄໍາໄປນໍາກັນໄປໃນພະຄໍາພີ ພະນິມິດ 14:1 ທີ່ໄດ້ກ່າວວ່າ "ຂ້າພະເຈົ້າໄດ້ເຫັນແລະດັ່ງນີ້ ພຣະເມສານ້ອຍຊົງຢືນຢູ່ທີ່ພູຊີໂອນ ແລະຜູ້ທີ່ຢູ່ກັບພຣະອົງມີຈໍານວນແສນສີ່ຫມື່ນສີ່ພັນຄົນ ຊຶ່ງເປັນຜູ້ທີ່ມີພຣະນາມຂອງພຣະອົງແລະພຣະນາມພຣະບິດາຂອງພຣະອົງຂຽນໄວ້ທີ່ຫນ້າຜາກຂອງເຂົາ."

ຂໍ້ທີ1: ໃຫ້ພີ່ນ້ອງສັງເກດວ່າໃນຂໍ້ນີ້ມີຊື່ທີ່ເປັນສັນຍາລັກຫລືເຄື່ອງໝາຍເຊິ່ງໄດ້ຖືກໃຊ້ໃນທີ່ນີ້:

1. ພະເມສານ້ອຍ, ຊື່ນີ້ໝາຍເຖິງໃຜພີ່ນ້ອງ? ພະເຢຊູ (ໂຢຮັນ 1:28)
2. ພູຊີໂອນ, ພູນີ້ແມ່ນໝາຍເຖິງບ່ອນໃດ? ສະຫວັນ (ສະດຸດີ 74:2)
3. 144,000 ຄົນ, ຄົນເຫລົ່ານີ້ແມ່ນໃຜ? ພວກເຂົາແມ່ນກຸ່ມຄົນທີ່ພະເຈົ້າໄດ້ຊົງເລືອກໄວ້ເປັນພິເສດ.

ພວກເຮົາສາມາດໃຊ້ເວລາໝົດມື້ເພື່ອທີ່ຈະສຶກສາວ່າ 144,000 ຄົນນີ້ ແມ່ນແສນສີ່ຫມື່ນສີ່ພັນຄົນແທ້ບໍ່ ຫລືເປັນພຽງແຕ່ເຄື່ອງໝາຍຫລືສັນຍາລັກເທົ່ານັ້ນ. ແນວໃດກໍຕາມພວກເຮົາຈະບໍ່ມາເສຍເວລາກ່ຽວກັບສິ່ງນີ້. ບໍ່ວ່າຈະເປັນແສນສີ່ຫມື່ນສີ່ພັນຄົນ ຫລືວ່າເປັນພຽງສັນຍາລັກ ສິ່ງນີ້ບໍ່ແມ່ນປະເດັນຂອງຂ້າພະເຈົ້າ ບໍ່ວ່າຈະຫລາຍຫລືຈະໜ້ອຍກວ່າແສນສີ່ຫມື່ນສີ່ພັນຄົນ ຂ້າພະເຈົ້າຢາກຈະເປັນຫນຶ່ງໃນຈໍານວນຄົນເຫລົ່ານັ້ນ. ຫລາຍກວ່ານັ້ນສິ່ງທີ່ສໍາຄັນສໍາລັບຂ້າພະເຈົ້າແມ່ນຂ້າພະເຈົ້າຢາກຢູ່ກັບພະເຢຊູ ແລະຢາກຈະຢືນຢູ່ຕໍ່ພະພັກພະອົງ. ຂ້າພະເຈົ້າຢາກຈະມີບຸກຄະລິກຄືດັ່ງແສນສີ່ຫມື່ນສີ່ພັນຄົນນີ້. ໃຫ້ເຮົາມາສຶກສາວ່າພະຄໍາພີໄດ້ອະທິບາຍແນວໃດກ່ຽວກັບພວກ ພະນິມິດ 14:4-5 ໄດ້ກ່າວວ່າ "ເຂົາຄົນເຫລົ່ານນີ້ແຫລະ, ເປັນຜູ້ທີ່ບໍ່ມີຄວາມຊົ່ວມົວຫມອງກັບຜູ້ຍິງ ເພາະເຂົາເປັນພວກພົມມະຈາຣີ ພຣະເມສານ້ອຍສະເດັດໄປທາງໃດແມ່ນຄົນເຫລົ່ານີ້ທີ່ຕາມສະເດັດ ຄົນເຫລົ່ານີ້ແຫລະ, ທີ່ຊົງໄຖ່ໄວ້ຈາກມວນມະນຸດ ເພື່ອເປັນຜົນແຮກຖວາຍແດ່ພຣະເຈົ້າ ແລະແດ່ພຣະເມສານ້ອຍ ຈະຫາຄວາມຕົວະໃນປາກຂອງເຂົາບໍ່ພົບ ເຂົາບໍ່ມີຈຸດດ່າງພ້ອຍແລ້ວ"

ຈຸດທີ່ສໍາຄັນໃນທີ່ນີ້ແມ່ນ "ພຣະເມສານ້ອຍສະເດັດໄປທາງໃດແມ່ນຄົນເຫລົ່ານີ້ທີ່ຕາມສະເດັດ" ໃຫ້ເຮົາສັງເກດນໍາກັນວ່າ ພວກເຂົາຕິດຕາມພຣະເມສານ້ອຍບໍ່ພຽງແຕ່ຍາມມີທະໜົນຣາບພຽງຫລືມີສະພາບແວດລ້ອມທີ່ສຸກສໍາບາຍ ພວກເຂົາຕິດຕາມພຣະເມສານ້ອຍບໍ່ພຽງແຕ່ເມື່ອການເປັນຄຣິສຕຽນໄດ້ຮັບການຊູກຽດຈາກສັງຄົມ ພວກເຂົາຕິດຕາມພຣະເມສານ້ອຍບໍ່ພຽງແຕ່ເມື່ອພະເຈົ້າຕອບຄໍາອະທິຖານຂອງພວກເຂົາຕາມສິ່ງທີ່ພວກເຂົາຕ້ອງການ. ໃຫ້ສັງເກດກັບຂ້າພະເຈົ້າວ່າ ພວກເຂົາຕິດຕາມພຣະເມສານ້ອຍໄປທຸກບ່ອນທຸກທີ່ທີ່ພະອົງສະເດັດໄປ ຫລືຈະເວົ້າອີກຢ່າງໜຶ່ງແມ່ນພວກ

ເຂົາຍິນດີທີ່ຈະເປັນຄົນຕ່າງໝູ່ເຖິງແມ່ນວ່າມັນຈະເປັນສິ່ງທີ່ບໍ່ມີຊື່ສຽງກໍຕາມ. ພວກເຂົາພ້ອມທີ່ຈະຢືນຫຍັດເພື່ອພະອົງທີ່ແທນຈະໄປຕີສະຫນິດກົມກືນກັບຄົນມັກເວົ້າລັບຫລັງ ເວົ້າຄໍາເປີ້ນເປີະ ເວົ້າໃສ່ຮ້າຍສຽດສີຜູ້ອື່ນ. ສິ່ງທີ່ເຮັດໃຫ້ເຂົາແຕກຕ່າງຈາກຄົນອື່ນແມ່ນພວກເຂົາມີອຸດົມການແນ່ວແນ່ໃນຈິດໃຈຂອງພວກເຂົາວ່າ ບໍ່ວ່າຈະມີຫຍັງເກີດຂຶ້ນ ພວກເຂົາຈະຕິດຕາມພຣະເມສານ້ອຍໄປ

**ເລື່ອງຂອງຄົນທີ່ບໍ່ກ້າເປີດເຜີຍວ່າຕົນເປັນຄຣິສຕຽນ**

**(ເລື່ອງປະກອບ)**

(ໃຫ້ຫາເລື່ອງມາປະກອບ)

ພວກເຮົາເອີ້ນພວກເຂົາວ່າຄຣິສຕຽນຫລົບໆສ້ອນໆ ພະເຈົ້າບໍ່ຕ້ອງການຄຣິສຕຽນຫລົບໆສ້ອນໆ, ພີ່ນ້ອງທັງຫລາຍເອີ້ຍ ພະເຈົ້າຕ້ອງການເອລີຢາ ດານີເອນ ຮານານີຢາ ມີຊາເອນ ແລະ ອາຊາຣີຢາ ທີ່ເປັນຄົນປະຈຸບັນ ພະອົງຕ້ອງການໃຫ້ຊາຍຍິງທີ່ພ້ອມທີ່ຈະສູ້ເພື່ອພະອົງ ແລະຢູ່ກັບພະອົງບໍ່ວ່າຈະຮ້າຍຫລືດີ

**ຊື່ຂອງພະເຈົ້າ**

ຍ້ອນກັບມາທີ່ 144,000 ຄົນ ຢາກຈະໃຫ້ພີ່ນ້ອງຄິດອີກເທື່ອໜຶ່ງກັບຂ້າພະເຈົ້າວ່າແມ່ນຫຍັງທີ່ຂຽນເທິງໜ້າຜາກຂອງພວກເຂົາ, ນັ້ນແມ່ນຊື່ຂອງພະເຈົ້າ. ໃຫ້ເຮົາມາສຶກສາເລິກວ່າສິ່ງນີ້ໝາຍຄວາມວ່າແນວໃດ. ຢ່າງທີ່ຂ້າພະເຈົ້າໄດ້ເວົ້າໄປແລ້ວວ່າຊື່ຊ່ອຍບົ່ງບອກເຖິງຕົວບຸກຄົນ ເພາະນັ້ນການທີ່ມີຊື່ຂອງພະເຈົ້າຂຽນໄວ້ເທິງເຂົາໜ້າຜາກຂອງພວກເຂົາໝາຍເຖິງວ່າພວກເຂົາແມ່ນໃຜ ແລະເປັນຄົນຂອງຜູ້ໃດ

ໃນພະຄໍາພີຊື່ກໍບົ່ງບອກເຖິງລັກສະນະຂອງບຸກຄົນ. ມີເລື່ອງຂອງສອງອ້າຍນ້ອງເຊິ່ງໄດ້ກ່າວໃນພະຄໍາປະຖົມມະການ, ຜູ້ເປັນອ້າຍຊື່ວ່າ ເອຊາວ ແລະຜູ້ນ້ອງຊື່ວ່າ ຢາໂຄບ. ຕາມເລື່ອງແລ້ວຢາໂຄບເຊິ່ງຊື່ຂອງລາວມີຄວາມໝາຍວ່າ “ຫລອກລວງ” ໄດ້ຫລອກລວງພໍ່ເພື່ອທີ່ຈະຍາດເອົາພອນຂອງສິດທິລູກກົກ ເຊິ່ງຕາມທໍານຽມແລ້ວຈະຕ້ອງຕົກເປັນຂອງເອຊາວຜູ້ເປັນລູກກົກ. ຍ້ອນການຫລອກລວງນີ້ຢາໂຄບຈໍາເປັນໄດ້ໜີອອກຈາກເຮືອນເປັນເວລາຫລາຍປີ. ແລະຜົນຍ້ອນກັບລາວກໍຖືກພໍ່ເຖົ້າຂອງລາວຕົວະໃຫ້ເຮັດວຽກເປັນເວລາ 14 ປີ. ໃນທີ່ສຸດລາວກໍຕັດສິນໃຈພາຄອບຄົວຂອງລາວກັບມາແຜ່ນດິນເກີດຂອງລາວ. ໃນຂະນະທີ່ລາວເດີນທາງກັບນັ້ນລາວໄດ້ຍິນວ່າເອຊາວອ້າຍຂອງລາວໄດ້ມຸ່ງໜ້າມາຫາລາວພ້ອມດ້ວຍກອງທັບໃຫຍ່ເພື່ອມາແກ້ແຄ້ນ. ໃນຄືນນັ້ນຢາໂຄບຕົກຢູ່ໃນຄວາມກັງວົນຫລາຍ. ຂ້າພະເຈົ້າຄິດວ່າລາວຕ້ອງອອກໄປນອກຜູ້ດຽວເພື່ອຫາທາງອອກ

ລາວຄົງອອກໄປເບິ່ງໄກໆເພື່ອຫາບ່ອນຫລີກອອກຈາກບັນຫາໃຫຍ່ທີ່ກຳລັງຈະມາຫາ. ແລະໃນຂະນະທີ່ລາວມີຄວາມທຸກເຂັນໃຈ ລາວຄົງເອີ້ນຫາພະເຈົ້າຂອງບັນພະບູຫລຸດລາວ. ພະຄຳພີໄດ້ກ່າວວ່າທູດສະຫວັນໄດ້ມາປາກົດແກ່ລາວ ທູດສະຫວັນອົງນີ້ບໍ່ແມ່ນທູດສະຫວັນທຳມະດາ ແຕ່ເປັນຫົວໜ້າທູດສະຫວັນ. ນັ້ນຄືພະເຢຊູນັ້ນເອງ

ລາວສົນທະນາກັບທູດສະຫວັນແລະບໍ່ຍອມໃຫ້ທູດສະຫວັນໄປ. ພະຄຳພີຍັງເວົ້າອີກວ່າ ຢາໂຄບໄດ້ຕໍ່ສູ້ກັບທູດສະຫວັນທັງຄືນ (ປຖມກ 32:26-29 ຊາຍຜູ້ນັ້ນເວົ້າວ່າ, “ປ່ອຍໃຫ້ເຮົາໄປເສັງເພາະຕາເວັນກໍກຳລັງຈະຂຶ້ນແລ້ວ” ແຕ່ຢາໂຄບຕອບວ່າ, “ຂ້າພະເຈົ້າຈະບໍ່ປ່ອຍທ່ານໄປ ຈົນກວ່າທ່ານຈະອວຍພອນໃຫ້ຂ້າພະເຈົ້າ” ຊາຍຄົນນັ້ນຈຶ່ງຖາມວ່າ, “ເຈົ້າຊື່ຫຍັງ?” ຢາໂຄບຕອບວ່າ, “ຂ້າພະເຈົ້າຊື່ຢາໂຄບ” ທ່ານເວົ້າຕື່ມອີກວ່າ, “ຊື່ຂອງເຈົ້າຈະບໍ່ແມ່ນຢາໂຄບອີກ ເພາະວ່າເຈົ້າໄດ້ຕໍ່ສູ້ກັບພຣະເຈົ້າແລະມະນຸດ ແລະໄດ້ຊະນະ ດັ່ງນັ້ນ ເຈົ້າຈະມີຊື່ໃຫມ່ວ່າ ອິສຣາເອນ” ຢາໂຄບເວົ້າວ່າ, “ກະຣຸນາບອກຊື່ທ່ານໃຫ້ຂ້າພະເຈົ້າຮູ້ແດ່” ແຕ່ທ່ານຊ້ຳຕອບວ່າ, “ເປັນຫຍັງເຈົ້າຈຶ່ງຖາມຊື່ເຮົາ?” ຄັນແລ້ວ ຊາຍຜູ້ນັ້ນກໍອວຍພອນໃຫ້ຢາໂຄບ)

ເພື່ອນທີ່ຮັກທັງຫລາຍ, ນັບຕັ້ງແຕ່ຄືນນັ້ນຊີວິດຂອງຢາໂຄບໄດ້ປ່ຽນໄປຕະຫລອດການ. ຄືນນັ້ນຊື່ຢາໂຄບ ເຊິ່ງມີຄວາມໝາຍວ່າ “ຄົນຫລອກລວງ” ໄດ້ປ່ຽນມາເປັນ “ອິສຣາເອນ” ເຊິ່ງມີຄວາມໝາຍວ່າ “ພະເຈົ້າຊະນະ” ຄືນດຽວກັນນັ້ນເອງ ຊາຍຄົນໜຶ່ງເຊິ່ງເປັນຊາຍທີ່ຮູ້ກັນດີຈາກອຸປະນິໄສຫລອກລວງແລະບໍ່ສັດຊື່ຂອງລາວ ໄດ້ກາຍມາເປັນຊາຍທີ່ຮູ້ຈັກກັນດີໃນ “ຊາຍທີ່ພະເຈົ້າຄອບຄອງດ້ວຍຄວາມຊະນະ” ໃນທີ່ນີ້ເອງນັກສໍ້ໂກງຫລອກລວງໄດ້ເຂົ້າມາພົບພະເຈົ້າແບບເຊິ່ງໆໜ້າເປັນຄັ້ງທຳອິດ. ລາວອາດຈະເຄີຍໄດ້ຍິນເລື່ອງຂອງພະເຈົ້ານີ້ຈາກບັນພະບູຫລຸດຂອງລາວ. ຄືນນັ້ນເອງຄືນທີ່ລາວໄດ້ພົບກັບພະເຈົ້າ ພະເຈົ້າຂອງບັນພະບູຫລຸດຂອງລາວໄດ້ກາຍມາເປັນພະເຈົ້າຂອງລາວ.

ພີ່ນ້ອງທີຮັກ ເລື່ອງຂອງຢາໂຄບແມ່ນເລື່ອງຂອງການປ່ຽນແປງໃໝ່. ຢາໂຄບແມ່ນປະເພດຄົນທີ່ຄົນສ່ວນໃຫຍ່ເປັນ. ຢາໂຄບແມ່ນປະເພດຄົນຢ່າງດຽວກັນກັບພວກເຮົາເຊິ່ງໄດ້ຜ່ານປະສົບການແຫ່ງການປ່ຽນໃໝ່. ເມື່ອກ່ອນເຮົາບໍ່ຮູ້ຈັກພະເຢຊູ ພວກເຮົາເຮັດໃນສິ່ງທີ່ເຮົາຢາກຈະເຮັດ ພວກເຮົາໃຊ້ຊີວິດໃຫ້ມີຄວາມສຸກຕາມໃຈມັກຂອງເຮົາ ພວກເຮົາຕົວະພວກເຮົາຫລອກລວງເພື່ອໃຫ້ໄດ້ສິ່ງທີ່ເຮົາປາດຖະໜາ. ແຕ່ຫລັງຈາກນັ້ນເອງ ໃນຊ່ວງເວລາໃດໜຶ່ງທີ່ພວກເຮົາຫິວກະຫາຍສິ່ງໃດໜຶ່ງ ບໍ່ມີຊັບສົມບັດໃດ ແລະຄວາມສະໜຸກໃດໃນໂລກນີ້ສາມາດຕອບສະໜອງຄວາມຕ້ອງການອັນເລິກໆຂອງເຮົາໄດ້. ຫລັງຈາກນັ້ນພະເຢຊູໄດ້ຍ່າງເຂົ້າມາໃນຊີວິດຂອງເຮົາ ພວກເຮົາໄດ້ສົນທະນາກັບພະອົງແລະບໍ່ຍອມໃຫ້ພະອົງໄປຈາກເຮົາເໝືອນຢ່າງຢາໂຄບ.

ຖ້າຫາກວ່າມີຄວາມຫວັງສຳລັບຢາໂຄບ ນັ້ນກໍໝາຍຄວາມວ່າມີຄວາມຫວັງສຳລັບພີ່ນ້ອງ ສຳລັບຂ້າພະເຈົ້າເຊັ່ນດຽວກັນ. ເຖິງແມ້ເບິ່ງຄືວ່າບໍ່ມີທາງເລີຍທີ່ຈະປ່ຽນນິໄສຂອງເຮົາໄດ້ ບໍ່ເປັນຫຍັງພະເຈົ້າປ່ຽນໄດ້ ພະເຈົ້າເອົາຊະນະທຸກສິ່ງໄດ້ ເຖິງແມ້ເບິ່ງຄືວ່າເຮົາບໍ່ມີທາງເລີຍທີ່ຈະປ່ຽນນິໄສຂອງການສໍ້ໂກງຫລອກລວງ ຫລືເວົ້າລັບຫລັງຄົນອື່ນ ພະເຈົ້າປ່ຽນໄດ້. ເຖິງແມ້ເບິ່ງຄືວ່າບໍ່ມີທາງເລີຍທີ່ເຮົາຈະປ່ຽນມາເປັນຄົນອ່ອນສຸພາບ, ຮັກແລະຫ່ວງໄຍຄົນອື່ນ, ພ້ອມທີ່ຈະໃຫ້ແລະໃຫ້ອະໄພຄົນອື່ນ. ບໍ່ເປັນຫຍັງພະເຈົ້າປ່ຽນໄດ້. ເຖິງແມ້ວ່າເຮົາອາດຈະທຽບບໍ່ໄດ້ກັບຄົນ 144,000 ຄົນ ບໍ່ເປັນຫຍັງພະເຈົ້າປ່ຽນໄດ້.

ເຫັນບໍ່ວ່າ ສິ່ງທີ່ເຮັດໃຫ້ 144,000 ຄົນ ຢືນຢັດເພື່ອພະອົງໃນທ່າມກາງຄົນໃນສັງຄົມແມ່ນພະເຈົ້ານັ້ນເອງທີ່ໄດ້ຝັງອຸປະນິໄສອັນບໍລິສຸດໃນໜ້າຜາກຂອງເຂົາ. ຂໍໃຫ້ພີ່ນ້ອງສັງເກດກັບຂ້າພະເຈົ້າໃຫ້ດີຊື່ຂອງພະເຈົ້າບໍ່ໄດ້ຂຽນຈາລຶກໄວ້ທີ່ມື, ທີ່ເທົ້າ, ທີ່ຫລັງ, ຫລືທີ່ທ້ອງຂອງພວກເຂົາ. ພະຄຳພີພາສາອັງກິດສະບັບ KJV ໄດ້ໃຊ້ຄຳສັບ “ຢູ່ໃນໜ້າຜາກຂອງພວກເຂົາ” ແລ້ວແມ່ນຫຍັງທີ່ຢູ່ໃນໜ້າຜາກ? ນັ້ນແມ່ນສະໝອງ. ສະໝອງສ່ວນໜ້າ ເຊິ່ງເປັນພາກສ່ວນທີ່ຄວບຄຸມທຸກສິ່ງທີ່ເຮົາເປັນນັ້ນຄືບຸກຄະລິກນິໄສ, ການຮຽນຮູ້, ແລະການເຄື່ອນໄຫວຂອງເຮົາ. ນີ້ແມ່ນທີ່ເຊິ່ງພະວິນຍານບໍລິສຸດໄດ້ສື່ສານກັບພວກເຮົາ. ພີ່ນ້ອງເຫັນຫລືບໍ່ ຖ້າຊື່ຂອງພະເຈົ້າໄດ້ຖືກຂຽນໄວ້ບ່ອນນີ້, ມັນມີຜົນຕໍ່ກັບຮ່າງກາຍທັງໝົດ.

ພະຄຳພີພາສາອັງກິດສະບັບອື່ນ (NIV) ໄດ້ໃຊ້ຄຳສັບ “ຢູ່ເທິງໜ້າຜາກ” ແລະກໍບໍ່ຂັດກັບພາສາກຣີກ. ນັ້ນກໍໝາຍຄວາມວ່າຖືກຕ້ອງ ແລະຖືກຕ້ອງທັງສອງສະບັບ. ຄຳວ່າ “ໃນ” ແມ່ນໝາຍເຖິງຢູ່ຂ້າງໃນ ແລະຄຳວ່າ “ເທິງ” ແມ່ນໝາຍເຖິງຢູ່ທາງນອກ. ຄຳວ່າ “ເທິງ” ໝາຍເຖິງສິ່ງທີ່ເຮົາສາມາດເບິ່ງເຫັນ (ຖ້າຫາກເປັນຄຳສັບ) ພີ່ນ້ອງເຫັນບໍ່ວ່າ ຖ້າມີສິ່ງໃດຖືກຂຽນເທິງໜ້າຜາກຂອງພີ່ນ້ອງມັນຍາກຫລາຍທີ່ຈະເບິ່ງບໍ່ເຫັນ ເຖິງແມ້ວ່າພີ່ນ້ອງຈະເບິ່ງບໍ່ເຫັນ ແຕ່ຄົນອື່ນສາມາດເບິ່ງເຫັນແລະສາມາດບອກພີ່ນ້ອງໄດ້ວ່າສິ່ງນັ້ນຢູ່ເທິງໜ້າຜາກຂອງພີ່ນ້ອງ.

**ເລື່ອງປະກອບ**

(ໃຫ້ຫາເລື່ອງມາປະກອບ)

ເມື່ອໂມເຊລົງມາຈາກພູເຂົາຊີນາຍ ຫລັງຈາກທີ່ໄດ້ສົນທະນາກັບພະເຈົ້າ ລາວໄດ້ເຕີບໂຕຂຶ້ນ ແຕ່ລາວບໍ່ຮູ້ໂຕ ລາວເຕີບໂຕຂຶ້ນຈົນຄົນອ້ອມຂ້າງລາວຂໍໃຫ້ລາວປິດໂຕລາວໄວ້

**ເຊີນຊວນ**

ພີ່ນ້ອງທີ່ຮັກ, ຖ້າມີຄົນເບິ່ງມາທີ່ພີ່ນ້ອງເຂົາສາມາດຮູ້ໄດ້ບໍ່ວ່າພີ່ນ້ອງໄດ້ຢູ່ກັບພະເຢຊູ? ເມື່ອພວກເຂົາເບິ່ງມາທີ່ພີ່ນ້ອງ ພວກເຂົາສາມາດເຫັນພະນາມພະເຈົ້າ, ບຸກຄະລິກພະເຈົ້າຂຽນໄວ້ເທິງໜ້າຜາກພີ່ນ້ອງບໍ່? ພວກເຂົາສາມາດບອກໄດ້ບໍ່ວ່າພີ່ນ້ອງເປັນຂອງຜູ້ໃດ?

ເມື່ອສົງຄາມໂລກຄັ້ງທີສອງສິ້ນສຸດລົງ ທະຫານຝະຣັ່ງເປັນຈຳນວນຫລາຍກວ່າ 200 ຄົນກັບມາປາຣີສໃນສະພາບທີ່ສູນເສຍຄວາມຊົງຈຳ. ພວກເຂົາຖືກຈອງຈຳຢູ່ໃນຄ້າຍກັກກັນຂອງຍີ່ປຸ່ນ. ແລະພວກເຂົາຖືກທາລຸນນະກຳໃຫ້ອົດອາຫານ, ພວກເຂົາຖືກທໍລະມານຫລາຍ ທະຫານເຫລົ່ານີ້ໄດ້ຮັບຄວາມເຈັດປວດທາງດ້ານຮ່າງກາຍຫລາຍຈົນເຮັດໃຫ້ພວກເຂົາເສຍສະຕິເສຍຄວາມຊົງຈຳແລະລືມໄປວ່າພວກເຂົາເປັນໃຜແລະມາຈາກໃສ

ໃນກໍລະນີສ່ວນໃຫຍ່ ຂໍ້ມູນສ່ວນຕົວຂອງເຂົາສາມາດຄົ້ນໄດ້ຈາກສະພາກາແດງຫລືຈາກເພື່ອນຮ່ວມຄຸກຂອງເຂົາ. ແຕ່ວ່າມີທະຫານ 32 ຄົນທີ່ຂໍ້ມູນສ່ວນຕົວຂອງບໍ່ສາມາດຄົ້ນໄດ້ເລີຍ. ຄົ້ນສາຂໍ້ມູນທີ່ໃດກໍຫາບໍ່ພົບ ແລະກໍເບິ່ງມີໃຜຮູ້ຈັກຫຍັງກ່ຽວເຂົາ. ທ່ານໝໍທີ່ຮັກສາເຂົາໄດ້ເວົ້າວ່າໂອກາດທີ່ຈະພົບຂໍ້ມູນກ່ຽວກັບເຂົາຖ້າເປັນໄປໄດ້ກໍແມ່ນມີໜ້ອຍຫລາຍ ເວັ້ນເສຍພຽງເຂົາໄດ້ພົບຄົນທີ່ເຂົາຮູ້ຈັກມາກ່ອນເຊັ່ນເພື່ອນແລະຍາດພີ່ນ້ອງທີ່ຊ່ອຍກູ້ຄວາມຊົງຈຳທີ່ເຂົາເຄີຍຄຸ້ນເຄີຍມາກ່ອນ

ເຂົາໄດ້ເຄີຍເອົາຮູບຂອງທະຫານຜ່ານເສິກທີ່ສູນເສຍຄວາມຊົງຈຳນີ້ລົງໃນໜັງສືພິມໜ້າທຳອິດທົ່ວປະເທດ ໂດຍນັດວັນເວລາໃຫ້ປະຊາຊົນທົ່ວປະເທດທີ່ຄຸ້ນເຄີຍກັບໃບໜ້າເຫລົ່ານີ້ໃຫ້ມາທີ່ ປາຣີສໂອເປຣາ ຮາວສ໌ (Paris Opera House). ວິທີນີ້ໄດ້ຜົນຫລາຍ ໃນວັນເວລານັດພົບຜູ້ຄົນກໍມາເຕົ້າໂຮມກັນເພື່ອຈະໃຫ້ຂໍ້ມູນກ່ຽວກັບທະຫານຜ່ານເສິກຜູ້ທີ່ເຂົາຄຸ້ນເຄີຍ. ພໍຮອດເວລາ ທະຫານຜ່ານເສິກຄົນທຳອິດຜູ້ໜ້າສົງສານກໍຍ່າງຂຶ້ນມາເທິງເວທີແລະຄ່ອຍໆຫັນໄປຮອບໆໃຫ້ທ່ານຜູ້ຊົມໄດ້ເຫັນ ແລະລາວກໍເວົ້າອອກມາຄ່ອຍໆວ່າ “ມີໃຜໃນທີ່ນີ້ຮູ້ວ່າຂ້າພະເຈົ້າເປັນໃຜບໍ່?

ຄົນຢູ່ຂ້າງຮູ້ວ່າພີ່ນ້ອງເປັນໃຜຜູ້ໃດບໍ່? ພີ່ນ້ອງຮູ້ບໍ່ວ່າພີ່ນ້ອງເປັນໃຜ? ແທ້ບໍ່, ເຈົ້າຊື່ຫຍັງ? ພີ່ນ້ອງເຫັນຫລືບໍ່ວ່າຊື່ຂອງພີ່ນ້ອງບອກວ່າພີ່ນ້ອງເປັນໃຜແລະພີ່ນ້ອງເປັນຂອງໃຜ. ພີ່ນ້ອງເປັນບຸດຕາບຸດຕີຂອງພະເຈົ້າຜູ້ພະຊົນຢູ່ແລະເປັນຂອງພະຜູ້ສ້າງຈັກກະວານ.

ມັດທາຍ 5:16 ເຫມືອນຢ່າງນັ້ນແຫລະ, ພວກທ່ານຈົ່ງສອ່ງແຈ້ງແກ່ຄົນທັງປວງ ເພື່ອວ່າ, ເມື່ອເຂົາເຫັນການດີທີ່ພວກທ່ານເຮັດເຂົາຈະໄດ້ສັຣເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສວັນ